**ຄູ່ຮ່ວມມືທາງການແພດຂອງ Saint Thomas**
**ຄລີນິກການແພດ Ascension Saint Thomas Hickman**
**ASCENSION SAINT THOMAS RIVER PARK HOSPITAL, LLC**

# ບົດສະຫຼຸບນະໂຍບາຍການຊ່ວຍເຫຼືອທາງການເງິນ

Ascension Saint Thomas ມີຄວາມມຸ່ງໝັ້ນ ແລະ ເຄົາລົບກຽດສັກສີຂອງແຕ່ລະຄົນ ໂດຍໃຫ້ຄວາມໃສ່ໃຈເປັນພິເສດແກ່ຄົນທີ່ພະຍາຍາມຕໍ່ສູ້ກັບອຸປະສັກຕ່າງໆ ເພື່ອເຂົ້າເຖິງການບໍລິການດູແລສຸຂະພາບ. Ascension Saint Thomas ມີຄວາມມຸ້ງໝັ້ນຢ່າງເທົ່າທຽມກັນເພື່ອຄຸ້ມຄອງຊັບພະຍາກອນດ້ານສຸຂະພາບຂອງຕົນໃຫ້ເປັນການບໍລິການແກ່ຊຸມຊົນທັງໝົດ. ໂດຍອີງໃສ່ຫຼັກການເຫຼົ່ານີ້, Ascension Saint Thomas ສະໜອງການຊ່ວຍເຫຼືອທາງການເງິນສໍາລັບບາງຄົນທີ່ໄດ້ຮັບການດູແລສຸກເສີນ ຫຼື ການດູແລທີ່ຈໍາເປັນທາງການແພດອື່ນໆ ຈາກ Ascension Saint Thomas. ບົດສະຫຼຸບນີ້ຈະໃຫ້ພາບລວມຫຍໍ້ໆ ກ່ຽວກັບນະໂຍບາຍການຊ່ວຍເຫຼືອທາງການເງິນຂອງ Ascension Saint Thomas.

## ໃຜມີສິດໄດ້ຮັບ?

ທ່ານອາດຈະສາມາດໄດ້ຮັບການຊ່ວຍເຫຼືອທາງການເງິນ. ໂດຍທົ່ວໄປແລ້ວ, ການຊ່ວຍເຫຼືອທາງການເງິນແມ່ນໄດ້ກໍານົດໂດຍລາຍຮັບຄົວເຮືອນທັງໝົດຂອງທ່ານເມື່ອທຽບກັບລະດັບຄວາມທຸກຍາກຂອງລັດຖະບານກາງ. ຖ້າລາຍໄດ້ຂອງທ່ານຕໍ່າກວ່າ ຫຼື ເທົ່າກັບ 250% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານອາດຈະໄດ້ຮັບການດູແລຈາກການກຸສົນ 100% ໃນສ່ວນຂອງຄ່າບໍລິການທີ່ທ່ານຮັບຜິດຊອບ. ຖ້າລາຍໄດ້ຂອງທ່ານສູງກວ່າ 250% ຂອງລະດັບຄວາມທຸກຍາກທີ່ລັດຖະບານກາງກໍານົດ ແຕ່ບໍ່ເກີນ 500% ຂອງລະດັບຄວາມທຸກຍາກທີ່ລັດຖະບານກາງກໍານົດ, ທ່ານອາດໄດ້ຮັບອັດຕາສ່ວນຫຼຸດຕາມການປັບປ່ຽນເທື່ອລະໜ້ອຍ. ຄົນເຈັບທີ່ມີສິດສໍາລັບການຊ່ວຍເຫຼືອທາງການເງິນຈະບໍ່ຖືກຮຽກເກັບເງິນສໍາລັບການດູແລທີ່ເຂົ້າເງື່ອນໄຂຫຼາຍກວ່າຈໍານວນເງິນທີ່ຮຽກເກັບທົ່ວໄປສໍາລັບຄົນເຈັບທີ່ມີການຄຸ້ມຄອງປະກັນໄພ. ກະລຸນາໂທຫາ 833-263-9791 ສໍາລັບຂໍ້ມູນເພີ່ມເຕີມ ຫຼື ເຂົ້າເບິ່ງເວັບໄຊຂອງພວກເຮົາທີ່
https://healthcare.ascension.org/financial-assistance/tennessee

## ການບໍລິການໃດແດ່ໄດ້ຮັບການຄຸ້ມຄອງ?

ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນໄດ້ນໍາໃຊ້ກັບການເບິ່ງແຍງດູແລສຸກເສີນ ແລະ ການເບິ່ງແຍງດູແລທີ່ຈໍາເປັນທາງການແພດອື່ນໆ. ຂໍ້ກໍານົດເຫຼົ່ານີ້ແມ່ນໄດ້ກໍານົດໄວ້ໃນນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ. ການບໍລິການເລືອກເສີມບໍ່ແມ່ນນະໂຍບາຍການຊ່ວຍເຫຼືອທາງການເງິນ.

## ຂ້າພະເຈົ້າສາມາດສະໝັກຂໍໄດ້ແນວໃດ?

ເພື່ອສະຫມັກຂໍການຊ່ວຍເຫຼືອທາງດ້ານການເງິນ, ປົກກະຕິທ່ານ ຈະຕ້ອງຂຽນໃບຄໍາຮ້ອງສະຫມັກຂໍເປັນລາຍລັກອັກສອນ ແລະ ປະກອບເອກະສານສະໜັບສະໜູນໃຫ້ຕາມທີ່ລະບຸໄວ້ໃນນະໂຍບາຍການ ຊ່ວຍເຫຼືອທາງດ້ານການເງິນ ແລະ ການໃຊ້ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ.

## ຂ້າພະເຈົ້າສາມາດຮັບການຊ່ວຍເຫຼືອກັບການສະໝັກຂໍໄດ້ແນວໃດ?

ຖ້າທ່ານມີຄໍາຖາມໃດໜຶ່ງ, ກະລຸນາຕິດຕໍ່ສູນບໍລິການລູກຄ້າຂອງພວກເຮົາທີ່ 833-263-9791.

## ຂ້າພະເຈົ້າສາມາດຂໍຂໍ້ມູນເພີ່ມເຕີມໄດ້ແນວໃດ?

ສໍາເນົາຂອງນະໂຍບາຍການຊ່ວຍເຫຼືອທາງການເງິນ ແລະ ແບບສະໝັກຂໍນະໂຍບາຍການຊ່ວຍເຫຼືອທາງການເງິນແມ່ນມີໃຫ້ທີ່
https://healthcare.ascension.org/financial-assistance/tennessee ແລະ ໃນພະແນກບໍລິການທາງການເງິນສໍາລັບຄົນເຈັບ. ສໍາເນົາຟຣີຂອງນະໂຍບາຍການຊ່ວຍເຫຼືອທາງການເງິນ ແລະ ການສະໝັກຂໍການຊ່ວຍເຫຼືອທາງການເງິນແມ່ນສາມາດຮັບທາງໄປສະນີໂດຍໂທຫາ 833-263-9791 ຫຼື ຂຽນຫາພວກເຮົາເພື່ອຮ້ອງຂໍການສະໝັກທາງໄປສະນີທີ່ PO Box 80278, Indianapolis, IN 46240 ຫຼື ສົ່ງແຟັກຫາໝາຍເລກແຟັກທີ່ປອດໄພ 317-981-6312 ສໍາລັບການປະມວນຜົນ.

## ຈະເປັນແນວໃດຖ້າຫາກວ່າຂ້າພະເຈົ້າບໍ່ມີສິດໄດ້ຮັບ?

ຖ້າຫາກວ່າທ່ານບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນພາຍໃຕ້ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ, ທ່ານອາດຈະມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອປະເພດອື່ນ. ສໍາລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ສູນບໍລິການລູກຄ້າຂອງພວກເຮົາທີ່ 833-263-9791

ການແປພາສາສໍາລັບນະໂຍບາຍການຊ່ວຍເຫຼືອທາງການເງິນ, ການສະໝັກຂໍການຊ່ວຍເຫຼືອທາງການເງິນ ແລະ ບົດສະຫຼຸບໃນພາສາທີ່ເຂົ້າໃຈໄດ້ງ່າຍນີ້ແມ່ນມີໃຫ້ເມື່ອມີການຮ້ອງຂໍ.